# ແຈ້ງການປະຊາຊົນ

ສູນກາງສິດທິພົນລະເມືອງ (CRC) ຂອງກະຊວງແຮງງານແຫ່ງສະຫະຣັຖອະເມຣິກາ ເສັດສິ້ນການກວດສອບ ນະໂຍບາຍ, ວິທີປະຕິບັດ ແລະວິທີດຳເນີນການ ຂອງໂຄງການການປະກັນວ່າງງານ (UI) ຂອງພະແນກບໍຣິການຄົນງານແຫ່ງຣັຖອາຄັນຊໍ (ADWS) ດ້ານການໃຫ້ບໍຣິການຕ່າງໆ, ຜົນປະໂຫຍດ ແລະຂໍ້ມູນ ໃຫ້ແກ່ບຸກຄົນທີ່ຮູ້ພາສາອັງກິດບໍ່ຫລາຍພໍ (LEP). ຂໍ້ສະຫລຸບໂດຍທົ່ວໄປຂອງ CRC ຈາກການກວດສອບ ນະໂຍບາຍ, ວິທີປະຕິບັດ ແລະວິທີດຳເນີນການ ຂອງ ADWS ປາກົດວ່າ ADWS ບົກພ່ອງຈຶ່ງບໍ່ຕອບສນອງຕໍ່ຄວາມຕ້ອງການຂອງປະຊາກອນ LEP ໃນຣັຖອາຄັນຊໍ. ໃນບໍ່ດົນມານີ້ ທາງ ADWS ຈຶ່ງໄດ້ເຊັນຂໍ້ຕົກລົງຍິນຍອມໃຫ້ກັບ CRC ວ່າຕົນຈະປັບປຸງແກ້ໄຂການບໍຣິການຕ່າງໆໃຫ້ແກ່ລູກຄ້າ UI ທີ່ເປັນຄົນ LEP.

ລູກຄ້າບາງຄົນອາດມີສິດໃນການໄດ້ຮັບຜົນປະໂຫຍດ ຫລື ບໍຣິການ UI ຕ່າງໆ ຫາກມີການລົງຄຳເຫັນວ່າ ຜ່ານມາເຂົາໄດ້ຖືກປະຕິເສດເພາະຖືກເລືອກປະຕິບັດ. ລູກຄ້າທີ່ເຊື່ອວ່າ ADWS ໄດ້ປະຕິເສດຫລືຖ່ວງເວລາໃນການໃຫ້ຜົນປະໂຫຍດຫລືບໍຣິການ UI ໃດໆ ຍ້ອນວ່າຜູ້ກ່ຽວເປັນຄົນຮູ້ພາສາອັງກິດບໍ່ຫລາຍພໍ (LEP) ໃນຊ່ວງເວລາລະຫວ່າງ ວັນທີ 1 ເດືອນ 1 ປີ 2014 ເຖິງ ວັນທີ 15 ເດືອນ 5 ປີ 2017 ຈະສາມາດຍື່ນຄຳຮຽກຮ້ອງ ເລື່ອງທີ່ຕົນຖືກປະຕິເສດ/ຖ່ວງເວລາ ພ້ອມເອກະສານຫລັກຖານ ຕໍ່ ADWS **ພາຍໃນເກົ້າສິບ (90) ມື້** ນັບຕັ້ງແຕ່ວັນທີພິມເຜີຍຂໍ້ປະກາດນີ້. ຈົ່ງຍື່ນຄຳຮຽກຮ້ອງແລະເອກະສານຫລັກຖານທີ່ສະແດງເຖິງ ປະເພດ ແລະ/ຫລື ຈຳນວນ ຜົນປະໂຫຍດ ຊຶ່ງຜູ້ຮຽກຮ້ອງເຊື່ອວ່າຕົນມີສິດອັນສົມຄວນຮັບໄດ້ ແລະຄວນບອກເຫດຜົນດ້ວຍທີ່ຕົນເຊື່ອວ່າການບໍ່ຮູ້ຈັກພາສາເປັນອຸປະສັກຊຶ່ງໄດ້ເຮັດໃຫ້ຕົນບໍ່ຮັບຜົນປະໂຫຍດ UI ດັ່ງກ່າວ.

*ສົ່ງຄຳຮຽກຮ້ອງການຖືກປະຕິເສດທັງໝົດ ເຖິງ:*

ADWS
ATTN: Corina Parra, LEP Coordinator
P.O. Box 2981
Little Rock, AR 72203

ຫາກ ADWS ປະຕິເສດຄຳຮຽກຮ້ອງໃດໆທີ່ຫາວ່າ ADWS ໄດ້ປະຕິເສດຫລືຖ່ວງເວລາໃນການໃຫ້ຜົນປະໂຫຍດຫລືບໍຣິການດັ່ງກ່າວ, ຜູ້ຮຽກຮ້ອງສາມາດຍື່ນອຸທອນໄດ້ຕໍ່ໄປ ດ້ວຍການຍື່ນຄຳຮ້ອງທຸກໃຫ້ກັບ CRC ພາຍໃນ ໜຶ່ງຮ້ອຍແປດສິບ (180) ມື້ ນັບຕັ້ງແຕ່ວັນທີໄດ້ຮັບໃບແຈ້ງການປະຕິເສດຄຳຮຽກຮ້ອງດັ່ງກ່າວ.

*ຄຳອຸທອນຕໍ່ຄຳຕັດສິນປະຕິເສດຈາກ ADWS ຈະຕ້ອງໄດ້ສົ່ງທາງໄປສະນີ ເຖິງ:*

U.S. Department of Labor
Civil Rights Center
Office of External Enforcement
200 Constitution Avenue, NW
Room N-4123
Washington, DC 20210

*ຫລື ຈະສົ່ງຄຳອຸທອນຕໍ່ຄຳຕັດສິນປະຕິເສດຂອງ ADWS ທາງອີເມວ ກໍໄດ້ ເຖິງ:*

CRCExternalComplaints@dol.gov

*ຫລື ຈະສົ່ງຄຳອຸທອນຕໍ່ຄຳຕັດສິນປະຕິເສດຂອງ ADWS ທາງແຟັກຊ໌ ກໍໄດ້ ເຖິງ:*

Office of External Enforcement ເລກແຟັກຊ໌ (202) 693-6505 (ບໍ່ໃຫ້ເກີນ 15 ໜ້າເຈັ້ຍ).

ຫ້າມບໍ່ໃຫ້ ADWS ເລືອກປະຕິບັດຫລືຕອບໂຕ້ແກ້ແຄ້ນຕໍ່ຄົນໃດໆຍ້ອນຜູ້ກ່ຽວຫາກໄດ້ປະກອບສ່ວນໃດສ່ວນໜຶ່ງໃນເລື່ອງນີ້, ລວມທັງການຍື່ນຄຳຮ້ອງທຸກຫລືຕອບສນອງຕໍ່ໃບແຈ້ງການປະຕິເສດ.

ທຸກຄົນມີສິດຍື່ນຄຳຮ້ອງທຸກ ເຖິງ CRC ພາຍໃນໜຶ່ງຮ້ອຍແປດສິບ(180)ມື້ ນັບຕັ້ງແຕ່ໄດ້ຖືກປະຕິບັດຕໍ່ສູ້ຕົນ ທີ່ຜູ້ກ່ຽວຄິດວ່າການທີ່ຕົນໄດ້ຖືກປະຕິບັດແບບນັ້ນກໍເປັນຍ້ອນຜູ້ກ່ຽວຮູ້ພາສາອັງກິດບໍ່ຫລາຍພໍ (LEP) ຫລືຍ້ອນເປັນຄົນທີ່ຈັດເປັນກຸ່ມຊົນອື່ນທີ່ຖືກປົກປ້ອງ. ຄົນໃດທີ່ມີຄຳຖາມກ່ຽວກັບການຍື່ນຄຳຮ້ອງທຸກ ກໍສາມາດຕິດຕໍ່ສອບຖາມກັບຫ້ອງການບັງຄັບກົດໝາຍພາຍນອກ ຂອງ CRC ເລກໂທ 202-693-6502 (ສຽງ) ຫລື 800-877-8339 (Federal Relay Service – TTY/TDD), ຫລື ທາງອີເມວທີ່ CRCExternalComplaints@dol.gov.

*ວັນທີ:* **12/17/2017**